# ພິທີຮັບຟັງການໂອ້ລົມຂອງທ່ານຜູ້ອຳນວຍການ ທຄຕລ ແລະ ສ້າງຂະບວນການອອກແຮງງານລວມ

### ທີ່ ນະຄອນຫຼວງວຽງຈັນ, ວັນທີ 05 ມີນາ 2022

ໃນວັນເສົາ ວັນທີ 05/03/2022 ທີ່ຜ່ານມາ, ທຄຕລ ສຳນັກງານໃຫຍ່, ສາຂານະຄອນຫຼວງ, ສາຂາດົງໂດກ ແລະ ສາຂາໄຊເສດຖາ ໄດ້ສ້າງຂະບວນການອອກແຮງງານລວມພາຍໃນບໍລິເວນອ້ອມຮອບ ສຳນັກງານໃຫຍ່ ທຄຕລ ແລະ ຈັດກິດຈະກຳຂາຍຜະລິດຕະພັນ ແລະ ສິນຄ້າຕ່າງໆເຊັ່ນ: ໄຂ່, ເຕັກວຸ້ນ ແລະ ກະຕ່າຫວາຍ ເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນ ວັນແມ່ຍິງສາກົນ (ວັນທີ 08 ມີນາ) ຄົບຮອບ 112 ປີ ທີ່ໃກ້ຈະມາເຖິງນີ້.

ພາຍຫລັງສຳເລັດການສ້າງຂະບວນການອອກແຮງງານລວມແລ້ວ ພະນັກງານ ທຄຕລ ສຳນັກງານໃຫຍ່ ກໍ່ໄດ້ເຂົ້າຮ່ວມຟັງການໂອ້ລົມຂອງທ່ານຜູ້ອຳນວຍການ ທຄຕລ ຢູ່ທີ່ສະໂມສອນໃຫຍ່ ຂອງສະຖາບັນການທະນາຄານ ຢ່າງເປັນຂະບວນຟົດຟື້ນ.





















ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Facebook: BCEL Bank, Website: www.bcel.com.la